

# ບຸຕສາມຈຳພວກ

# THREE KINDS OF CHILDREN

**THE WORD OF**

**THE BUDDHA**

# THREE KINDS OF CHILDREN

# ບຸຕ ໓ ຈຳພວກ

ພິກຂຸທັງຫລາຍ! ບຸຕ ໓ ຈຳພວກນີ້ ມີປາກົຕຢູ່ໃນ ໂລກ ໓ ຈຳພວກເປັນຢ່າງໃດ? ຄື:

**ອະຕິຊາຕະບຸຕ,**

**ອະນຸຊາຕະບຸຕ,**

**ອະວະຊາຕະບຸຕ.**

ພິກຂຸທັງຫລາຍ! **ກໍອະຕິຊາຕະບຸດເປັນຢ່າງໃດ?** ພິກຂຸທັງຫລາຍ ມາຣດາ ບິດາຂອງບຸດໃນໂລກນີ້ ບໍ່ເຖິງພຣະພຸທທະເຈົ້າເປັນສະຣະນະ ບໍ່ເຖິງພຣະພຸທທັມເປັນສະຣະນະ ບໍ່ເຖິງພຣະສົງຄ໌ເປັນສະຣະນະ ບໍ່ງົດເວັ້ນຈາກການຂ້າສັດ, ບໍ່ງົດເວັ້ນຈາກການລັກຊັພຍ໌, ບໍ່ງົດເວັ້ນຈາກການປະພຶຕຜິດໃນກາມທັງຫລາຍ, ບໍ່ງົດເວັ້ນຈາກການເວົ້າຕົວະ, ບໍ່ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາອັນເປັນທີ່ຕັ້ງແຫ່ງຄວາມປະມາທ, ເປັນຄົນທຸສິລ, ມີທັມອັນເປັນບາບ **ສ່ວນບຸຕຂອງມາຣດາແລະບິດາເຫລົ່ານັ້ນ ເປັນຜູ້ເຖິງພຣະພຸທທະເຈົ້າເປັນສະຣະນະ ເຖິງພຣະທັມເປັນສະຣະນະ ເຖິງພຣະສົງຄ໌ເປັນສະຣະນະ ງົດເວັ້ນຈາກການຂ້າສັຕ, ງົດເວັ້ນຈາກການລັກຊັພຍ໌, ງົດເວັ້ນຈາກການປະພຶຕຜິດໃນກາມທັງຫລາຍ, ງົດເວັ້ນຈາກການເວົ້າຕົວະ, ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາອັນເປັນທີ່ຕັ້ງແຫ່ງຄວາມປະມາທ, ເປັນຄົນມີສິລ, ມີທັມອັນງາມ.** ພິກຂຸທັງຫລາຍ ອະຕິຊາຕະບຸຕເປັນຢ່າງນີ້ແລ.

ພິກຂຸທັງຫລາຍ! **ອະນຸຊາຕະບຸຕເປັນຢ່າງໃດ?** ພິກຂຸທັງຫລາຍ ມາຣດາ ບິດາຂອງບຸຕໃນໂລກນີ້ ເຖິງພຣະພຸທທະເຈົ້າເປັນສະຣະນະ ເຖິງພຣະທັມເປັນສະຣະນະ ເຖິງພຣະສົງຄ໌ເປັນສະຣະນະ ງົດເວັ້ນຈາກການຂ້າສັຕ, ງົດເວັ້ນຈາກການລັກຊັພຍ໌, ງົດເວັ້ນຈາກການປະພຶຕຜິດໃນກາມທັງຫລາຍ, ງົດເວັ້ນຈາກການເວົ້າຕົວະ, ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາອັນເປັນທີ່ຕັ້ງແຫ່ງຄວາມປະມາທ, ເປັນຄົນມີສິລ, ມີທັມອັນງາມ **ສ່ວນບຸຕຂອງມາຣດາແລະບິດາເຫລົ່ານັ້ນ ກໍເຖິງພຣະພຸທທະເຈົ້າເປັນສະຣະນະ ເຖິງພຣະທັມເປັນສະຣະນະ ເຖິງພຣະສົງຄ໌ເປັນສະຣະນະ ງົດເວັ້ນຈາກການຂ້າສັຕ, ງົດເວັ້ນຈາກການລັກຊັພຍ໌, ງົດເວັ້ນຈາກການປະພຶຕຜິດໃນກາມທັງຫລາຍ, ງົດເວັ້ນຈາກການເວົ້າຕົວະ, ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາອັນເປັນທີ່ຕັ້ງແຫ່ງຄວາມປະມາທ, ເປັນຄົນມີສິລ, ມີທັມອັນງາມ.** ພິກຂຸທັງຫລາຍ ອະນຸຊາຕະບຸຕເປັນຢ່າງນີ້ແລ.

ພິກຂຸທັງຫລາຍ! **ກໍອະວະຊາຕະບຸຕເປັນຢ່າງໃດ?** ພິກຂຸທັງຫລາຍ ມາຣດາ ບິດາຂອງບຸຕໃນໂລກນີ້ ເຖິງພຣະພຸທທະເຈົ້າເປັນສະຣະນະ ເຖິງພຣະທັມເປັນສະຣະນະ ເຖິງພຣະສົງຄ໌ເປັນສະຣະນະ ງົດເວັ້ນຈາກການຂ້າສັຕ, ງົດເວັ້ນຈາກການລັກຊັພຍ໌, ງົດເວັ້ນຈາກການປະພຶຕຜິດໃນກາມທັງຫລາຍ, ງົດເວັ້ນຈາກການເວົ້າຕົວະ, ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາອັນເປັນທີ່ຕັ້ງແຫ່ງຄວາມປະມາທ, ເປັນຄົນມີສີລ, ມີທັມອັນງາມ; **ສ່ວນບຸຕຂອງມາຣດາແລະບິດາເຫລົ່ານັ້ນ ບໍ່ເຖິງພຣະພຸທທະເຈົ້າເປັນສະຣະນະ ບໍ່ເຖິງພຣະທັມເປັນສະຣະນະ ບໍ່ເຖິງພຣະສົງຄ໌ເປັນສະຣະນະ ບໍ່ງົດເວັ້ນຈາກການຂ້າສັຕ, ບໍ່ງົດເວັ້ນຈາກການລັກຊັພຍ໌, ບໍ່ງົດເວັ້ນຈາກການປະພຶຕຜິດໃນກາມທັງຫລາຍ, ບໍ່ງົດເວັ້ນຈາກການເວົ້າຕົວະ, ບໍ່ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາອັນເປັນທີ່ຕັ້ງແຫ່ງຄວາມປະມາທ, ເປັນຄົນທຸສີລ, ມີທັມອັນເປັນບາບ.** ພິກຂຸທັງຫລາຍ ກໍອະວະຊາຕະບຸຕເປັນຢ່າງນີ້ແລ.

ບັນດິຕທັງຫລາຍຍ່ອມປາຖນາອະຕິຊາຕະບຸຕ ແລະ ອະນຸຊາຕະບຸຕ ຍ່ອມບໍ່ປາຖນາອະວະຊາຕະບຸຕ ເຊິ່ງເປັນຜູ້ທຳລາຍຕະກຸນ ສ່ວນບຸຕເຫລົ່າໃດເປັນອຸປາສົກ ບຸຕເຫລົ່ານັ້ນແລຊື່ວ່າ ເປັນບຸຕໃນໂລກ ບຸຕເຫລົ່ານັ້ນມີສັທທາ ເຖິງພ້ອມດ້ວຍສີລ ຮູ້ຄວາມປະສົງ*(ຂອງຜູ້ຂໍ)* ປາສະຈາກຄວາມຂີ້ຖີ່ ຍ່ອມຮຸ່ງເຮື່ອງໃນບໍຣິສັທທັງຫລາຍ ປຽບເໝືອນດວງຈັນທ໌ທີ່ພົ້ນແລ້ວຈາກເມກສັນນັ້ນ.

*ຂຸທທະກະນິກາຍ. ບຸຕຕະສູຕ ໔໕/໔໑໔-໔໑໖/໔໕໔*



# Three Kinds of Children

This was said by the Buddha, the Perfected One: that is what I heard.

“These three kinds of children are found in the world. What three? One who betters their birth, one who equals their birth, one who fails their birth.
And how does a child better their birth? It’s when a child’s parents have not gone

for refuge to the Buddha, the teaching, and the Saṅgha. They kill living creatures, steal, commit sexual misconduct, lie, and use alcoholic drinks that cause negligence. They’re immoral, of bad character. But their child has gone for refuge to the Buddha, the teaching, and the Saṅgha. They don’t kill living creatures, steal, commit sexual misconduct, lie, or take alcoholic drinks that cause negligence. They’re ethical, of good character. That’s how a child betters their birth.

And how does a child equal their birth? It’s when a child’s parents have gone for refuge to the Buddha, the teaching, and the Saṅgha. They don’t kill living creatures, steal, commit sexual misconduct, lie, or take alcoholic drinks that cause negligence. They’re ethical, of good character. And their child has gone for refuge to the Buddha, the teaching, and the Saṅgha. They don’t kill living creatures, steal, commit sexual misconduct, lie, or

take alcoholic drinks that cause negligence. They’re ethical, of good character. That’s how a child equals their birth.

And how does a child fail their birth? It’s when a child’s parents have gone for refuge to the Buddha, the teaching, and the Saṅgha. They don’t kill living creatures, steal, commit sexual misconduct, lie, or take alcoholic drinks that cause negligence. They’re ethical, of good character. But their child has not gone for refuge to the Buddha, the teaching, and the Saṅgha. They kill living creatures, steal, commit sexual misconduct, lie, and use alcoholic drinks that cause negligence. They’re immoral, of bad character. That’s how a child fails their birth. These are the three kinds of children found in the world.”

The Buddha spoke this matter. On this it is said:

“The astute wish for a child
who betters or equals their birth;
not one who fails their birth,
disgracing their family.

These are the children in the world
who become lay devotees;
faithful, accomplished in ethics,
bountiful, rid of stinginess.
Like the moon freed from a cloud,
they shine in the assemblies.”

This too is a matter that was spoken by the Blessed One: that is what I heard.

*Puttasutta Iti 74*
*https://suttacentral.net/iti74*
*Translated by Bhikkhu Sujato*

Dhamma pocket Book
compiled from Thai Tipitaka
and Suttacentral.net

**This book is free for distribution only.**

Compiled by Bhikkhu Bounnao

For more information:
Buddhavacana.word@gmail.com

ບັນດິຕທັງຫລາຍຍ່ອມປາຖະໜາອະຕິຊາຕະບຸຕ ແລະອະນຸຊາຕະບຸຕ ຍ່ອມບໍ່ປາຖະໜາອະວະຊາຕະບຸຕ ເຊິ່ງເປັນຜູ້ທຳລາຍຕະກຸນ ສ່ວນບຸຕເຫລົ່າໃດເປັນອຸປາສົກ ບຸຕເຫລົ່ານັ້ນແລຊື່ວ່າ ເປັນບຸຕໃນໂລກ ບຸຕເຫລົ່ານັ້ນມີສັທທາ ເຖິງພ້ອມດ້ວຍສິລ ຮູ້ຄວາມປະສົງ (ຂອງຜູ້ຂໍ) ປາສະຈາກຄວາມຂີ້ຖີ່ ຍ່ອມຮຸ່ງເຮືອງໃນບໍຣິສັທທັງຫລາຍ ປຽບເໝືອນດວງຈັນທ໌ທີ່ພົ້ນແລ້ວຈາກເມກ ສັນນັ້ນ.

*ຂຸທທະກະນິກາຍ. ປຸຕຕະສູຕ ໒໕/໒໑໔-໒໑໗/໒໕໒*

